ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ຫ້ອງການ

ເລກທີ 0563/ຫກ

ນະຄອນຫຼວງວຽງຈັນ, ວັນທີ 12 ກຸມພາ 2026

## ໜັງສືແຈ້ງເຊີນປະມູນ

1. ຫ້ອງການ ກະຊວງການເງິນ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີເງື່ອນໄຂຄົບຖ້ວນ ເຂົ້າຮ່ວມຍື່ນຊອງປະມູນ ການບໍລິການອະນາໄມຕຶກແຄມຂອງ (ຕຶກ A,B,C ແລະ D) ແລະ ສູນສະຖິຕິແຫ່ງຊາດ ປະຈຳປີ 2026;
2. ການປະມູນແມ່ນຈະດຳເນີນຕາມຂັ້ນຕອນປະມູນເປີດກວ້າງທີ່ໄດ້ກຳນົດໃນກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ ແມ່ນເປີດກວ້າງໃຫ້ທຸກໆບໍລິສັດ ຂອງນິຕິບຸກຄົນພາຍໃນ ທີ່ດຳເນີນທຸລະກິດຢູ່ ໃນ ສປປ ລາວ, ມີໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນທຸລະກິດ, ໃບທະບຽນອາກອນ ປີ 2024 ຖືກຕ້ອງຕາມກົດໝາຍ;
4. ການປະມູນນີ້ແມ່ນເປີດກວ້າງໃຫ້ທຸກໆບໍລິສັດ ທີ່ດຳເນີນທຸລະກິດຢູ່ ສປປ ລາວ, ເຊິ່ງມີເງື່ອນໄຂຄົບຖ້ວນເຊັ່ນ: ມີໃບທະບຽນວິສາຫະກິດ, ມີເລກປະຈຳຕົວຜູ້ເສຍອາກອນ, ໃບຢັ້ງຢືນການປະຕິບັດພັນທະພາສີອາ ກອນ ຖືກຕ້ອງຕາມກົດໝາຍ;
5. ບໍລິສັດທີ່ມີຄວາມສົນໃຈ ສາມາດຕິດຕໍ່ພົວພັນເອກະສານຄົບຊຸດໄດ້ທີ່ ພະແນກບໍລິຫານ, ຫ້ອງການກະຊວງການເງິນ ( ເບີໂທລະສັບ: 020 55553594 ) ໃນໂມງລັດຖະການ, ນັບແຕ່ວັນທີ 16 ກຸມພາ ເຖິງ 23 ມີນາ 2026, ລາຄາຊອງປະມູນ **1**,000,000 ກີບ ແລະ ໃບຈຳນວນເງິນດັ່ງກ່າວນີ້ແມ່ນຈະບໍ່ມີການສົ່ງຄືນ;
6. ຊອງປະມູນຕ້ອງສົ່ງກ່ອນເວລາ **10:00** ໂມງ,ຂອງວັນທີ 23 ມີນາ 2026 ທີ່ພະແນກບໍລິຫານ ຫ້ອງການ ກະຊວງການເງິນ ແລະ ຊອງປະມູນເປີດກວ້າງຈະໄດ້ເປີດໃນເວລາ 14:00ໂມງ ຂອງວັນທີ 23 ມີນາ 2026 ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນ ທີ່ສົນໃຈຕ້ອງການເຂົ້າຮ່ວມ ທີ່ ຫ້ອງປະຊຸມ ຊັ້ນ 04 ກະຊວງການເງິນ;
7. ທຸກຊອງປະມູນຕ້ອງໄດ້ປະກອບໜັງສືຄ້ຳປະມູນການປະມູນດ້ວຍກຽດ ຫຼື ໜັງສືຄ້ຳປະກັນການປະມູນຈາກທະນາຄານ, ຊຶ່ງມູນຄ່າຂອງການຄ້ຳປະກັນບໍ່ໃຫ້ຫຼຸດ 2% ຂອງລາຄາປະມູນມາພ້ອມ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານຊາບ ແລະ ເຂົ້າຮ່ວມການປະມູນໃນຄັ້ງນີ້ດ້ວຍ.

ເຫັນດີ ຫົວໜ້າຫ້ອງການ

ກະຊວງການເງິນ

ຫ້ອງການ

ພົງສະຫວັນ ລາດທິຈັກ

สแกนด้วย CamScanner